**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 1182 /ຫຄຊກລ.ຄມ
ນະຄອນຫລວງວຽງຈັນ, ວັນທີ 05 ພ.ຈິກ 2024

# ບົດບັນທຶກກອງປະຊຸມ
# ວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ລບຕ ປະຈຳໄຕມາດ 4 ປີ 2024

## I ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ

ກອງປະຊຸມວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ລບຕ ປະຈຳໄຕມາດ 4 ປີ 2024 ທີ່ຫ້ອງປະຊຸມ ຂອງໂຮງແຮມລາວເທວ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ, ຫົວໜ້າ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຫ້ອງການ ຄຊກລ) ແລະ ມີຜູ້ເຂົ້າຮ່ວມຄື: ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ, ຊ່ຽວຊານ ຕາງໜ້າຈາກອົງການສະຫະປະຊາຊາດ, ຊ່ຽວຊານຈາກບໍລິສັດເທທາເທັກ, ຫົວໜ້າໜ່ວຍງານຄຸ້ມຄອງການສຳຫຼວດ ແລະ ເກັບກູ້, ໜ່ວຍງານຄຸ້ມຄອງກວດກາຄຸນນະພາບ, ວິຊາການຈາກບັນດາໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ໜ່ວຍງານໂຄສະນາ ສຶກສາຄວາມສ່ຽງໄພ ຫ້ອງການ ຄຊກລ, ວິຊາການ ແລະ ຊ່ຽວຊານ ຈາກ 08 ອົງການ ມະນຸດສະທຳ (ໂຄງການເກັບກູ້ລະເບີດແຫ່ງຊາດ, ກອງກວດກູ້ເພື່ອມະນຸດສະທຳກອງທັບ 58, ອົງການເອັນພີເອ, ອົງການຮາໂລທຣັສ, ອົງການແມັກປະຈຳ ສປປ ລາວ ແລະ ອົງການເຮັຈໄອ), ບໍລິສັດມິນເຊີດເກັບກູ້ລະເບີດ ແລະ ບໍລິສັດລາວຮ່ວມໃຈ, ບໍລິສັດ SL ເກັບກູ້ລະເບີດ ແລະ ບໍລິສັດສີສັນຈະເລີນ ສຳຫຼວດ, ກວດກູ້ ແລະ ທຳລາຍ ລະເບີດ ຈຳກັດຜູ້ດຽວ. ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 35 ທ່ານ ເປັນເພດຍິງ 10 ທ່ານ (28.6 ສ່ວນຮ້ອຍ ຂອງ ຜູ້ເຂົ້າຮ່ວມທັງໝົດ).

## II ຈຸດປະສົງ

1. ລາຍງານກ່ຽວກັບກິດຈະກຳການຄຸ້ມຄອງຂໍ້ມູນຂ່າວສານ ແລະ ສະຖິຕິ ການປະຕິບັດງານຂອງຂະແໜງ ການ ລບຕ ປະຈຳປີ 2024 ແລະ ແຜນກິດຈະກຳ ປີ 2025
2. ນຳສະເໜີ ກ່ຽວກັບບົດລາຍງານຄວາມຄືບໜ້າປະຈຳເດືອນ Monthly progress report ໃນ ArcGIS online
3. Dashboard ໃນ ArcGIS online ເພື່ອສະໜັບສະໜູນ ໃຫ້ການຈັດບູລິມະສິດ
4. ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ສ້າງຄວາມອາດສາມາດ ໃນການຄຸ້ມຄອງຖານຂໍ້ມູນ ທີ່ຈັດຕັ້ງປະຕິບັດຮ່ວມກັບອົງການ ເອັນພີເອ
5. ເພື່ອນຳສະເໜີຕົວຊີ້ວັດ ແຜນຍຸດທະສາດແຫ່ງຊາດ ວ່າດ້ວຍ ການແກ້ໄຂບັນຫາລະເບີດບໍ່ທັນແຕກ

6. ເພື່ອນຳສະເໜີຄວາມຄືບໜ້າ ກ່ຽວກັບ ການເຊື່ອມສານບົດບາດ ຍິງ-ຊາຍ ເຂົ້າໃນຂະແໜງການ ລບຕ ຂອງ ສປປ ລາວ.

### III ເນື້ອໃນກອງປະຊຸມ

- ສະຫຼຸບ ການເຄື່ອນໄຫວວຽກງານກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ແລະ ສະຖິຕິການປະຕິບັດງານ ໃນ ຂະແໜງການ ລບຕ ສະເພາະປີ 2024;
- ນຳສະເໜີກ່ຽວກັບບົດລາຍງານຄວາມຄືບໜ້າປະຈຳເດືອນ Monthly progress report ໃນ ArcGIS online;
- ນຳສະເໜີ Dashboard ໃນ ArcGIS online ເພື່ອສະໜັບສະໜູນໃຫ້ການຈັດລຽງບູລິມະສິດ
- ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ສ້າງຄວາມອາດສາມາດ ໃນການຄຸ້ມຄອງຂໍ້ມູນຂ່າວສານ ທີ່ຈັດຕັ້ງປະຕິບັດຮ່ວມກັບອົງການ ເອັນພີເອ;
- ລາຍງານຕົວຊີ້ວັດ ແຜນຍຸດທະສາດແຫ່ງຊາດ ວ່າດ້ວຍ ການແກ້ໄຂບັນຫາລະເບີດບໍ່ທັນແຕກ
- ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດການເສື່ອມສານບົດບາດຍິງ – ຊາຍ ໃນຂະແໜງການ ລບຕ
- ຊ່ຽວຊານອົງການເອັນພີເອ ສະເໜີຕົວຢ່າງລະບົບເກັບກຳຂໍ້ມູນຜູ້ເຂົ້າຮ່ວມການຝຶກອົບຮົມ ຜ່ານໂປຣແກັມ Survey 123

### IV. ຂໍ້ສະເໜີ ແລະ ຂໍ້ຕົກລົງ ພາຍໃນກອງປະຊຸມ

- ສະເໜີໃຫ້ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ສືບທົບກັບໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ເອົາຂໍ້ມູນການໂຄສະນາຂອງ ອົງການເຫີລາ ແລະ ບໍລິສັດລ້ານຊ້າງມິເນໂລນ ເຂົ້າໃນຖານຂໍ້ມູນແຫ່ງຊາດ
- ສະເໜີ ໃຫ້ໜ່ວຍງານທີ່ກ່ຽວຂ້ອງ ປະສານງານກັບໂຄງການເກັບກູ້ລະເບີດແຫ່ງຊາດ ເລື່ອງການເກັບກຳຂໍ້ມູນ ການເຂົ້າຮ່ວມຝຶກອົບຮົມຕ່າງໆ
- ແບບຟອມບົດລາຍງານການສຳຫຼວດບໍ່ແມ່ນແບບວິຊາການ NTS ໃນໂປຣແກັມຖານຂໍ້ມູນ ແມ່ນໃຫ້ໜ່ວຍງານຮັບຜິດຊອບ ປັບປຸງ ແລະ ສະໜອງກັບຄືນໃຫ້ອົງການປະຕິບັດງານ ນຳໃຊ້ທົ່ວຂະແໜງການ
- ພວກເຮົາມີຄວາມຍິນດີ ທີ່ຈະຮ່ວມມື ສະໜອງຂໍ້ມູນ ແລະ ແລກປ່ຽນຂໍ້ມູນ ກັບສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ
- ໃຫ້ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ສືບຕໍ່ປະສານງານກັບອົງການ ເອັນພີເອ ທີ່ພັດທະນາລະບົບການເກັບກຳຂໍ້ມູນຜູ້ເຂົ້າຮ່ວມການຝຶກອົບຮົມ ຜ່ານໂປຣແກັມ Survey 123.
- ໃຫ້ໜ່ວຍງານຮັບຜິດຊອບກ່ຽວກັບການເຊື່ອມສານບົດບາດຍິງ - ຊາຍ ສ້າງແຜນການຈັດຕັ້ງປະຕິບັດ ກິດຈະກຳໃນໄຕມາດ 4 ໃຫ້ລະອຽດ
- ການສ້າງຕົວຊີ້ວັດ ແຜນຍຸດທະສາດແຫ່ງຊາດ ວ່າດ້ວຍ ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, ໄລຍະ 2021 - 2030, ໂດຍສະເພາະ ຕົວຊີ້ວັດ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງຂໍ້ມູນ ແລະ ກອງປະຊຸມ ໄດ້ມີການປະກອບຄຳຄິດຄຳເຫັນ ດັ່ງຕໍ່ໄປນີ້:

  – ຕົວຊີ້ວັດ ຄວນລະອຽດ ແລະ ສະເພາະເຈາະຈົງເຊັ່ນ: ການນັບຈຳນວນຄັ້ງ ຈະເໝາະສົມກ່ວາການນັບຈຳນວນຄົນ, ເນື່ອງຈາກວ່າ ການເຂົ້າຮ່ວມກອງປະຊຸມ ຫຼື ການເຂົ້າຮ່ວມຝຶກອົບຮົມໃດໜຶ່ງ ຜູ້ເຂົ້າຮ່ວມຜູ້ໜຶ່ງ ສາມາດເຂົ້າຮ່ວມໄດ້ຫຼາຍຄັ້ງ, ການເຂົ້າຮ່ວມແຕ່ລະຄັ້ງ ອາດຈະມີຫົວຂໍ້ທີ່ແຕກຕ່າງກັນ ຫຼື ລະດັບຕ່າງກັນ (ຂັ້ນພື້ນຖານ, ຂັ້ນກາງ ຫຼື ຂັ້ນຊຳນານ).

- ການສ້າງຕົວຊີ້ວັດ ຄວນມີຄໍານິຍາມ ເພື່ອໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ມີຄວາມເຂົ້າໃຈໄປໃນທິດທາງດຽວກັນ.
- ການສ້າງຕົວຊີ້ວັດ ຄວນມີການເກັບກໍາຂໍ້ມູນທີ່ແຍກອອກເປັນ ເພດ (ຍິງ-ຊາຍ) ເພື່ອສົ່ງເສີມການເຊື່ອມສານບົດບາດ ຍິງ-ຊາຍ ເຂົ້າໃນຂະແໜງການ ລບຕ.
- ການສ້າງຕົວຊີ້ວັດ ຄວນລະບຸຢ່າງຈະແຈ້ງວ່າ ຕ້ອງການວັດແທກຜົນໄດ້ຮັບຂອງພາກສ່ວນໃດ: ຂອງຫ້ອງການ ຄຊກລ, ຂອງອົງການປະຕິບັດງານ ຫຼື ຂອງຂະແໜງການ?
- ການສ້າງຕົວຊີ້ວັດ ຄວນເນັ້ນໃສ່ການວັດແທກຜົນໄດ້ຮັບ ເຊັ່ນ: ການຮັບຮູ້ ແລະ ຄວາມເຂົ້າໃຈຂອງຜູ້ເຂົ້າຮ່ວມ.
- ພາກສ່ວນທີ່ກ່ຽວຂ້ອງຂອງຫ້ອງການ ຄຊກລ ຈະນໍາເອົາການປະກອບຄໍາຄິດຄໍາເຫັນ ໄປປັບປຸງຮ່າງຕົວຊີ້ວັດ. ຫຼັງຈາກນັ້ນ, ກໍຈະໄດ້ມີການຂໍອະນຸມັດນໍາໃຊ້ຕົວຊີ້ວັດດັ່ງກ່າວ ຈາກກະຊວງການຕ່າງປະເທດ. ຄາດຄະເນວ່າ ຈະສາມາດນໍາໃຊ້ ແລະ ເລີ່ມເກັບກໍາຂໍ້ມູນ ນັບແຕ່ຕົ້ນປີ 2025 ເປັນຕົ້ນໄປ.

ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມ. ຫຼັງຈາກນັ້ນ, ທ່ານໄດ້ກ່າວຄໍາຂອບໃຈບັນດາຜູ້ແທນທີ່ເສຍສະຫຼະເວລາ ເຂົ້າຮ່ວມກອງປະຊຸມວິຊາການຄັ້ງນີ້ ພ້ອມທັງອວຍພອນໃຫ້ບັນດາຜູ້ແທນຈາກອົງການປະຕິບັດງານ ລບຕ ມີສຸຂະພາບເຂັ້ມແຂງ, ພາລະນາໄມສົມບູນ ແລະ ກ່າວປິດກອງປະຊຸມ.

ກອງປະຊຸມໄດ້ປິດລົງໃນເວລາ 12:20 ໂມງ ຂອງວັນທີ 29 ຕຸລາ 2024.

| **ປະທານກອງປະຊຸມ** | **ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ** |
|---|---|
| ຫ້ອງການ ຄຊກລ | |
| ບຸນເພັງ ສີສະຫວັດ | |